ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 119/ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 125/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ຄປຈ, ລົງວັນທີ 29 ກໍລະກົດ 2024.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 125 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

## ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຄັ້ງວັນທີ 21 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 28 ມິຖຸນາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 57 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍສະພາປະຊາຊົນຂັ້ນແຂວງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການອຳນາດລັດຂັ້ນທ້ອງຖິ່ນ, ປະກອບສ່ວນເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຢ່າງແທ້ຈິງ.

**ມາດຕາ 2 (ປັບປຸງ) ສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການອຳນາດລັດຢູ່ທ້ອງຖິ່ນ ປະຕິບັດພາລະບົດບາດ ພິຈາລະນາ, ຮັບຮອງເອົານິຕິກຳທີ່ມີຜົນບັງຄັບທົ່ວໄປ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາອົງການລັດໃນທ້ອງຖິ່ນ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະພາປະຊາຊົນຂັ້ນແຂວງ** ໝາຍເຖິງ ສະພາປະຊາຊົນ ນະຄອນຫຼວງ, ແຂວງ;
2. **ອຳນາດລັດຂັ້ນທ້ອງຖິ່ນ** ໝາຍເຖິງ ອຳນາດຂອງປະຊາຊົນໃນທ້ອງຖິ່ນ ຊຶ່ງມອບໃຫ້ສະພາປະຊາຊົນຂັ້ນແຂວງ ເປັນຕົວແທນ;
3. **ນິຕິກຳທີ່ມີຜົນບັງຄັບທົ່ວໄປຂອງທ້ອງຖິ່ນ** ໝາຍເຖິງ ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຂໍ້ຕົກລົງຂອງອົງການປົກຄອງທ້ອງຖິ່ນ;
4. **ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ** ໝາຍເຖິງ ບັນຫາທາງດ້ານການເມືອງ ແລະ ການປົກຄອງ, ດ້ານເສດຖະກິດ-ສັງຄົມ, ດ້ານການຈັດຕັ້ງ ແລະ ບຸກຄະລາກອນ;

5. **ອະພິສິດຂອງສະມາຊິກສະພາປະຊາຊົນຂັ້ນແຂວງ** ໝາຍເຖິງ ສິດພິເສດ ທີ່ກົດໝາຍກຳນົດໃຫ້ສະເພາະສະມາຊິກສະພາປະຊາຊົນຂັ້ນແຂວງ ເປັນຕົ້ນ ຈະບໍ່ຖືກ ຈັບຕົວ, ກັກຕົວ, ກັກຂັງ ຫຼື ດຳເນີນຄະດີອາຍາ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

6. **ການປະເມີນຄວາມໄວ້ວາງໃຈ** ໝາຍເຖິງ ການຕີລາຄາຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ດ້ວຍການໃຫ້ຄະແນນເປັນຕົວເລກ ເພື່ອຈັດປະເພດ ຕໍ່ຜົນສຳເລັດການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

7. **ການລົງມະຕິບໍ່ໄວ້ວາງໃຈ** ໝາຍເຖິງ ການລົງມະຕິບໍ່ສະໜັບສະໜູນ ຫຼື ບໍ່ເຊື່ອໝັ້ນ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ຕໍ່ການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ ໂດຍກອງປະຊຸມສະພາປະຊາຊົນຂັ້ນແຂວງ;

8. **ສາບານຕົນ** ໝາຍເຖິງ ປະຕິຍານຕົນ ຕໍ່ໜ້າສະພາປະຊາຊົນຂັ້ນແຂວງ ວ່າຈະປະຕິບັດໜ້າທີ່, ຕຳແໜ່ງດ້ວຍຄວາມສັດຊື່ບໍລິສຸດ ເພື່ອຮັບໃຊ້ຊາດ ແລະ ປະຊາຊົນ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບການເຄື່ອນໄຫວວຽກງານສະພາປະຊາຊົນຂັ້ນແຂວງ

ລັດ ໃຫ້ຄວາມສຳຄັນຕໍ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ ດ້ວຍການເຊີດຊູບົດບາດຂອງສະພາປະຊາຊົນຂັ້ນແຂວງ ໃຫ້ສູງຂຶ້ນ.

ລັດ ຊຸກຍູ້ບັນດາອົງການລັດຂັ້ນທ້ອງຖິ່ນ ເພີ່ມທະວີການພົວພັນ, ຮ່ວມມື ໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສາມາດປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ປຸກລະດົມໃຫ້ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ຂັ້ນທ້ອງຖິ່ນ, ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານສະພາປະຊາຊົນຂັ້ນແຂວງ.

ລັດ ສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງດ້ວຍການປະກອບບຸກຄະລາກອນ ທີ່ມີຄວາມຮູ້, ຄວາມສາມາດ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ໂຄງລ່າງພື້ນຖານ ແລະ ເງື່ອນໄຂອື່ນ ທີ່ຈຳເປັນ.

### ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:

1. ລວມສູນປະຊາທິປະໄຕ, ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ ແລະ ຕົກລົງບັນຫາຕາມສຽງສ່ວນຫຼາຍ;
2. ນິຕິທຳ;
3. ຍຸຕິທຳ;
4. ຕິດແທດຕົວຈິງກັບ ປະຊາຊົນ ແລະ ຮາກຖານ;
5. ປະສານສົມທົບຢ່າງກົມກຽວກັບອົງການລັດ ແລະ ອົງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 6 (ປັບປຸງ) ອາຍຸການຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ແຕ່ລະຊຸດ ມີອາຍຸການ ຫ້າປີ ຊຶ່ງເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ຊຸດນັ້ນ ໄປເຖິງກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ຊຸດໃໝ່.

ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດໃໝ່ ຕ້ອງໃຫ້ແລ້ວຢ່າງຊ້າ ຫົກສິບວັນ ກ່ອນສະພາປະຊາຊົນຂັ້ນແຂວງ ຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີ ມີຄວາມຫຍຸ້ງຍາກ ໃຫ້ແກ່ການເລືອກຕັ້ງ ຍ້ອນສະພາບການໃດໜຶ່ງນັ້ນ ກໍສາມາດຕໍ່ອາຍຸການຂອງສະພາປະຊາຊົນຂັ້ນແຂວງໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນ ສາມເດືອນ ພາຍຫຼັງສະພາບການດັ່ງກ່າວ ໄດ້ກັບຄືນສູ່ຄວາມເປັນປົກກະຕິ.

ໃນກໍລະນີມີຄວາມຈຳເປັນ ສະພາປະຊາຊົນຂັ້ນແຂວງ ຈະດຳເນີນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ກ່ອນໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ.

ປະທານສະພາປະຊາຊົນຂັ້ນແຂວງ, ປະທານຄະນະກຳມາທິການ ແລະ ຫົວໜ້າຫ້ອງວ່າການ ສະພາປະຊາຊົນຂັ້ນແຂວງ ດຳລົງຕຳແໜ່ງ ຢູ່ບ່ອນເກົ່າ ບໍ່ໃຫ້ເກີນ ສອງສະໄໝຕິດຕໍ່ກັນ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ສະພາປະຊາຊົນຂັ້ນແຂວງ ພົວພັນ ຮ່ວມມື ກັບສະພາປະຊາຊົນທ້ອງຖິ່ນຂອງຕ່າງປະເທດ ບົນພື້ນຖານນະໂຍບາຍການຕ່າງປະເທດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານ ຂອງສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບ ແລະ ປະສິດທິພາບ.

## ພາກທີ II
## ສະພາປະຊາຊົນຂັ້ນແຂວງ
### ໝວດທີ 1
### ທີ່ຕັ້ງ ແລະ ພາລະບົດບາດ ຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 8 ທີ່ຕັ້ງຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ ແລະ ເປັນອົງການອຳນາດລັດຢູ່ທ້ອງຖິ່ນ.

**ມາດຕາ 9 ພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີພາລະບົດບາດ ພິຈາລະນາ ແລະ ຮັບຮອງເອົາ ນິຕິກຳທີ່ມີຜົນບັງຄັບທົ່ວໄປຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດໃນທ້ອງຖິ່ນ.

### ໝວດທີ 2
### ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 10 ສິດ ແລະ ໜ້າທີ່ ລວມຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ລວມ ດັ່ງນີ້:

1. ສິດ ແລະ ໜ້າທີ່ ດ້ານນິຕິກຳ;
2. ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ;
3. ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ.

**ມາດຕາ 11 ສິດ ແລະ ໜ້າທີ່ ດ້ານນິຕິກຳ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານນິຕິກຳ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ນິຕິກຳທີ່ມີຜົນບັງຄັບທົ່ວໄປ ຂອງທ້ອງຖິ່ນ;

2. ພິຈາລະນາ, ຮັບຮອງເອົາ ແຜນການສ້າງ ແລະ ປັບປຸງນິຕິກຳທີ່ມີຜົນບັງຄັບທົ່ວໄປ ຂອງທ້ອງຖິ່ນ;

3. ຄົ້ນຄວ້າປະກອບຄຳເຫັນໃສ່ ຮ່າງລັດຖະທຳມະນູນ, ກົດໝາຍ;

4. ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ນິຕິກຳອື່ນຂອງທຸກຂະແໜງການທີ່ຢູ່ໃນຂັ້ນທ້ອງຖິ່ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ດັ່ງນີ້:

1. ດ້ານການເມືອງ ແລະ ການປົກຄອງ

1.1. ຮັບຟັງການລາຍງານ ແລະ ປະກອບຄຳເຫັນ ໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນ;

1.2. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ນະຄອນ, ຕາແສງ ແລະ ການກຳນົດເຂດແດນ ຂອງ ເມືອງ, ນະຄອນ, ຕາແສງ, ແຜນຜັງລວມຕົວເມືອງ ຂອງ ເມືອງ, ນະຄອນ, ຕາແສງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

1.3. ພິຈາລະນາ, ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ;

1.4. ພິຈາລະນາ, ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານຂອງ ສານປະຊາຊົນ, ອົງການໄອຍະການປະຊາຊົນ ພາກ, ນະຄອນຫຼວງ, ແຂວງ, ອົງການກວດສອບປະຈຳພາກ ບ່ອນທີ່ອົງການດັ່ງກ່າວຕັ້ງຢູ່ ແລະ ອົງການກວດກາລັດຂັ້ນແຂວງ;

1.5. ປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ວຽກງານ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

1.6. ລົງມະຕິບໍ່ໄວ້ວາງໃຈ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທັງໝົດເປັນຜູ້ສະເໜີ.

2. ດ້ານເສດຖະກິດ-ສັງຄົມ

2.1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງທ້ອງຖິ່ນ;

2.2. ພິຈາລະນາ, ຮັບຮອງເອົາ ແຜນການແບ່ງປັນງົບປະມານແຫ່ງລັດປະຈຳປີ ຕາມການແບ່ງປັນຂອງລັດຖະບານ;

2.3. ພິຈາລະນາ, ຮັບຮອງເອົາ ແຜນພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ, ແຜນພັດທະນາຕົວເມືອງ, ນະຄອນ, ຕາແສງ;

2.4. ພິຈາລະນາ, ຮັບຮອງເອົາ ແຜນຈັດສັນ, ການຫັນປ່ຽນປະເພດທີ່ດິນ ຈາກປະເພດໜຶ່ງ ໄປເປັນທີ່ດິນປະເພດອື່ນ ແລະ ການກຳນົດປະເມີນລາຄາທີ່ດິນຂອງທ້ອງຖິ່ນ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ;

2.5. ພິຈາລະນາ, ຮັບຮອງເອົາ ແຜນການກໍ່ສ້າງໂຄງລ່າງພື້ນຖານ ປະຈຳປີຂອງທ້ອງຖິ່ນ ແລະ ໂຄງການລະດັບທ້ອງຖິ່ນຮັບຜິດຊອບ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

2.6. ພິຈາລະນາ, ຮັບຮອງເອົາ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ຂອງອົງການກວດສອບປະຈຳພາກ ທີ່ກ່ຽວຂ້ອງກັບຂັ້ນແຂວງນັ້ນ.

3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

3.1. ດ້ານການຈັດຕັ້ງ

3.1.1. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາປະຊາຊົນຂັ້ນແຂວງ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ກົງຈັກຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.1.2. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ.

3.2. ດ້ານບຸກຄະລາກອນ

3.2.1. ເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ສະພາປະຊາຊົນຂັ້ນແຂວງ, ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.2.2. ພິຈາລະນາ, ຮັບຮອງເອົາ ການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

3.2.3. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນພາກ, ຫົວໜ້າອົງການໄອຍະການປະຊາຊົນພາກ ບ່ອນທີ່ອົງການນັ້ນຕັ້ງຢູ່, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ເຂດ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ;

3.2.4. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການ ຂອງສະພາປະຊາຊົນຂັ້ນແຂວງ;

3.2.5. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານ, ກຳມະການ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ແລະ ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນ ຫຼວງ, ແຂວງ.

ສຳລັບ ບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງເລືອກຕັ້ງ ເຊັ່ນ ປະທານສະພາປະຊາຊົນຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ປະທານສານປະຊາຊົນ ນະຄອນຫຼວງ, ແຂວງ ຕ້ອງສາບານຕົນ ໃນການຮັບໜ້າທີ່ຕຳແໜ່ງ.

**ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ ດັ່ງນີ້:

1. ຕິດຕາມກວດກາ ບັນດາອົງການລັດຂັ້ນທ້ອງຖິ່ນຂອງຕົນ ໃນການປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິ ແລະ ຂໍ້ຕົກລົງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

2. ຕິດຕາມກວດກາ ການອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງທ້ອງຖິ່ນຕົນ;

3. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານທາງດ້ານການເມືອງ, ການປົກຄອງ, ດ້ານເສດຖະກິດ-ສັງຄົມ, ດ້ານການຈັດຕັ້ງ ແລະ ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງຮັບຮອງເອົາ;

4. ຕິດຕາມກວດກາ ລາຍຮັບ ລາຍຈ່າຍງົບປະມານແຫ່ງລັດ ຂັ້ນແຂວງ ແລະ ຂັ້ນເມືອງ;

5. ປະເມີນຜົນການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ. ສໍາລັບວິທີການ ແລະ ລະບຽບການປະເມີນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ການສະເໜີສ້າງ ແລະ ປັບປຸງ ນິຕິກໍາ

### ມາດຕາ 14 (ປັບປຸງ) ການສະເໜີສ້າງ ແລະ ປັບປຸງ ນິຕິກໍາ

ການຈັດຕັ້ງ ທີ່ມີສິດສະເໜີສ້າງນິຕິກໍາທີ່ມີຜົນບັງຄັບໃຊ້ທົ່ວໄປ ຂອງທ້ອງຖິ່ນ ກ່ອນຈະສ້າງ ຫຼື ປັບປຸງ ນິຕິກໍາໃດໜຶ່ງຕາມແຜນການ ຕ້ອງຍື່ນຄໍາສະເໜີ ຕໍ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ໂດຍແຈ້ງຈຸດປະສົງ ແລະ ເຫດຜົນຂອງການສ້າງ ຫຼື ປັບປຸງ ນິຕິກໍາ ພ້ອມດ້ວຍການຄາດຄະເນຜົນກະທົບ ຫຼື ຜົນທີ່ຈະໄດ້ຮັບຈາກການຈັດຕັ້ງປະຕິບັດນິຕິກໍາດັ່ງກ່າວ.

ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕ້ອງພິຈາລະນາ, ໃຫ້ທິດຊີ້ນໍາ ແລະ ຕອບຄໍາສະເໜີດັ່ງກ່າວເປັນລາຍລັກອັກສອນ ຢ່າງຊ້າບໍ່ໃຫ້ເກີນ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາສະເໜີນັ້ນ ເປັນຕົ້ນໄປ.

### ມາດຕາ 15 (ປັບປຸງ) ການຄົ້ນຄວ້າຮ່າງນິຕິກໍາ ຢູ່ກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ

ການຈັດຕັ້ງຂັ້ນແຂວງ ທີ່ໄດ້ສ້າງ ຫຼື ປັບປຸງ ຮ່າງນິຕິກໍາ ສໍາເລັດແລ້ວ ຕ້ອງສະເໜີຮ່າງນິຕິກໍານັ້ນ ຕໍ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພິຈາລະນາ ຢ່າງຊ້າ ຫົກສິບວັນ ກ່ອນວັນເປີດກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ມອບຮ່າງນິຕິກໍາ ໃຫ້ຄະນະກໍາມະການທີ່ກ່ຽວຂ້ອງ ດໍາເນີນການກວດກາເນື້ອໃນຮອບດ້ານ ແລ້ວລາຍງານຕໍ່ກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພິຈາລະນາ.

ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕົກລົງ ກ່ຽວກັບການນໍາເອົາຮ່າງນິຕິກໍານັ້ນ ໄປປຶກສາຫາລືກັບປະຊາຊົນດ້ວຍຮູບການຕ່າງໆ ແລ້ວນໍາມາ ຄົ້ນຄວ້າ, ປັບປຸງຄືນ ກ່ອນທີ່ຈະນໍາສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ.

### ມາດຕາ 16 (ໃໝ່) ການພິຈາລະນາຮ່າງນິຕິກໍາ ຢູ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ນໍາເອົາຮ່າງນິຕິກໍາມາພິຈາລະນາຢູ່ກອງປະຊຸມ ເທື່ອດຽວ ຫຼື ສອງເທື່ອ, ເວັ້ນເສຍແຕ່ຮ່າງນິຕິກໍາບໍ່ໄດ້ຖືກຮັບຮອງ ຈາກກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຮ່າງນິຕິກໍາຖືກນໍາສະເໜີ ເພື່ອຂໍຄໍາເຫັນເບື້ອງຕົ້ນ ຊຶ່ງການຈັດຕັ້ງທີ່ມີສິດສະເໜີສ້າງນິຕິກໍາ ຕ້ອງປັບປຸງນິຕິກໍາດັ່ງກ່າວ ຕາມຄໍາເຫັນຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ.

### ມາດຕາ 17 (ປັບປຸງ) ຂັ້ນຕອນການພິຈາລະນາ ແລະ ຮັບຮອງເອົາຮ່າງນິຕິກໍາ ຢູ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ

ປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ ສະເໜີໃຫ້ຄະນະຮັບຜິດຊອບປ້ອງກັນຮ່າງນິຕິກໍາ ຂັ້ນແຂວງ ເປັນຜູ້ສະເໜີຮ່າງນິຕິກໍາ ໂດຍສັງລວມແຕ່ລະ ພາກ, ໝວດ ແລະ ມາດຕາ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ. ຈາກນັ້ນປະທານ ຈຶ່ງເຈາະຈີ້ມ ບັນຫາທີ່ເປັນພື້ນຖານຂອງຮ່າງນິຕິກໍາ ເພື່ອໃຫ້ກອງປະຊຸມປະກອບຄວາມເຫັນ.

ພາຍຫຼັງການປະກອບຄໍາເຫັນແລ້ວ ຄະນະຮັບຜິດຊອບປ້ອງກັນຮ່າງນິຕິກໍາ ຊີ້ແຈງ ແລະ ອະທິບາຍບັນຫາທີ່ສະມາຊິກສະພາປະຊາຊົນຂັ້ນແຂວງ ສົນໃຈ ແລະ ຍົກຂຶ້ນ ຈຶ່ງໃຫ້ກອງປະຊຸມພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາ.

ໃນກໍລະນີ ຊື່, ເນື້ອໃນ ບາງມາດຕາ ຂອງນິຕິກຳ ທີ່ຍັງບໍ່ທັນເປັນເອກະພາບກັນ ຕ້ອງໄດ້ລົງຄະແນນສຽງຮັບຮອງສະເພາະ ຊື່, ເນື້ອໃນນັ້ນ.

## ໝວດທີ 4
## ການສະເໜີ ແລະ ການພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ

**ມາດຕາ 18 (ປັບປຸງ) ການສະເໜີບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ**

ອົງການລັດຂັ້ນທ້ອງຖິ່ນ ຕ້ອງສະເໜີບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 19 ການພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຢູ່ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ ແລະ ລາຍງານ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 20 ການພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຢູ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ ແລະ ອົງການອື່ນ ທີ່ກ່ຽວຂ້ອງຂອງລັດຂັ້ນແຂວງ.

## ໝວດທີ 5
## ການສະເໜີ ແລະ ການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 21 (ປັບປຸງ) ການສະເໜີ ແລະ ການພິຈາລະນາ ແຜນການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ສ້າງ ແລະ ສະເໜີ ແຜນການຕິດຕາມກວດກາ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ.

**ມາດຕາ 22 (ປັບປຸງ) ການຈັດຕັ້ງປະຕິບັດແຜນການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ**

ການຈັດຕັ້ງປະຕິບັດແຜນການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ ດຳເນີນ ໂດຍ:

1. ກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ຄະນະກຳມະການສະພາປະຊາຊົນຂັ້ນແຂວງ;
4. ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ;
5. ສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 23 (ປັບປຸງ) ການລາຍງານ ແລະ ການພິຈາລະນາຜົນການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ**

ການລາຍງານ ແລະ ການພິຈາລະນາຜົນການຕິດຕາມກວດກາ ຢູ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ໃຫ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການຮັບຟັງການລາຍງານ ກ່ຽວກັບຜົນການຕິດຕາມກວດກາຂອງບັນດາການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂໍ້ 1 ຫາ ຂໍ້ 3 ຂອງກົດໝາຍສະບັບນີ້;
2. ປະທານກອງປະຊຸມ ມີຄຳເຫັນ ເຈາະຈີ້ມ;

3. ການປະກອບຄຳເຫັນ ຕໍ່ການລາຍງານດັ່ງກ່າວ;

4. ການຮັບຟັງການຊີ້ແຈງ ແລະ ອະທິບາຍ ຂອງພາກສ່ວນທີ່ຖືກຕິດຕາມກວດກາ;

5. ການຊັກຖາມກັບທີ່ ຕໍ່ບັນຫາທີ່ບໍ່ທັນຈະແຈ້ງ;

6. ພາກສ່ວນທີ່ຖືກຕິດຕາມກວດກາ ຕອບຄຳຊັກຖາມ;

7. ການພິຈາລະນາຮັບຮອງເອົາຜົນການຕິດຕາມກວດກາ ແລະ ມາດຕະການແກ້ໄຂ;

8. ການຮັບຟັງການລາຍງານ ກ່ຽວກັບການຈັດຕັ້ງປະຕິບັດຜົນການຕິດຕາມກວດກາ.

ສຳລັບການລາຍງານ ແລະ ການພິຈາລະນາ ການຕິດຕາມກວດກາ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

## ພາກທີ III
## ໂຄງປະກອບຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 24 (ປັບປຸງ) ໂຄງປະກອບຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີ ໂຄງປະກອບ ດັ່ງນີ້:

1. ສະມາຊິກສະພາປະຊາຊົນຂັ້ນແຂວງ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ປະທານ, ຮອງປະທານ ສະພາປະຊາຊົນຂັ້ນແຂວງ;
4. ຄະນະກຳມະການສະພາປະຊາຊົນຂັ້ນແຂວງ;
5. ຫ້ອງວ່າການສະພາປະຊາຊົນຂັ້ນແຂວງ.

### ໝວດທີ 1
### ສະມາຊິກສະພາປະຊາຊົນຂັ້ນແຂວງ

**ມາດຕາ 25 (ປັບປຸງ) ສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ແມ່ນ ຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຊຶ່ງແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງ ແລະ ຢູ່ພາຍໃຕ້ການກວດກາຂອງປະຊາຊົນ ໂດຍຜ່ານແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ ແລະ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຂັ້ນແຂວງ.

**ມາດຕາ 26 (ປັບປຸງ) ມາດຕະຖານຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກຳເນີດ;

2. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຈົງຮັກພັກດີ ແລະ ຕັ້ງຕໍ່ບໍລິສຸດ ຕໍ່ປະເທດຊາດ, ຖືເອົາຜົນປະໂຫຍດຂອງປະຊາຊົນເປັນກົກ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ, ມີຄວາມອົດທົນ, ປະຢັດ, ຊື່ສັດ, ທ່ຽງທຳ, ບໍ່ອວດອົ່ງທະນົງຕົວ, ບໍ່ສວຍໃຊ້ອຳນາດ ເດັດດ່ຽວຕ້ານການສໍ້ລາດບັງຫຼວງ, ຕ້ານພະຍາດອາດຍາສິດ ແລະ ເປັນແບບຢ່າງທີ່ດີ ໃນການປະຕິບັດກົດໝາຍ;

3. ກຳແໜ້ນ ແລະ ຍຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການ, ລັດຖະທຳມະນູນ ແລະ ກົດໝາຍ; ຮູ້ໂຄສະນາ ແລະ ສຶກສາອົບຮົມປະຊາຊົນ, ເດັດດ່ຽວສູ້ຊົນເຮັດໃຫ້ປະຊາຊົນ ຮັ່ງມີ ຜາສຸກ, ປະເທດຊາດມັ່ງຄັ່ງ ເຂັ້ມແຂງ, ສັງຄົມມີຄວາມສາມັກຄີ ປອງດອງ ປະຊາທິປະໄຕ ຍຸຕິທຳ ແລະ ສີວິໄລ;

4. ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ, ຄົ້ນຄວ້າມີຄຳເຫັນຕໍ່ບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ ແລະ ສາມາດປະຕິບັດໜ້າທີ່ຂອງຕົນໄດ້;

5. ມີລະດັບການສຶກສາຈົບຊັ້ນມັດທະຍົມຕອນຕົ້ນຂຶ້ນໄປ, ຮູ້ນຳໃຊ້ໄອທີ ແລະ ມີວິຊາສະເພາະໃດໜຶ່ງ;

6. ມີສຸຂະພາບດີ.

## ມາດຕາ 27 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮ່ຳຮຽນ ແລະ ເປັນແບບຢ່າງໃນການຈັດຕັ້ງປະຕິບັດແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

2. ໂຄສະນາ ເຜີຍແຜ່, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນ ໃຫ້ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການປະຕິບັດແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂັ້ນທ້ອງຖິ່ນ;

3. ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ; ໃນກໍລະນີທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຍ້ອນສາເຫດຈຳເປັນໃດໜຶ່ງ ຕ້ອງສະເໜີຢ່າງເປັນລາຍລັກອັກສອນ ເພື່ອຂໍອະນຸຍາດນຳປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

4. ຄົ້ນຄວ້າ ແລະ ກະກຽມເນື້ອໃນ ເພື່ອປະກອບຄຳເຫັນໃນກອງປະຊຸມ ແລະ ລົງຄະແນນສຽງດ້ວຍຄວາມຮັບຜິດຊອບສູງ;

5. ຊັກຖາມ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ; ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ ຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ; ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ, ປະທານອົງການກວດສອບປະຈຳພາກ;

6. ໃກ້ຊິດຕິດແທດ, ພົບປະ, ຮັບຕ້ອນປະຊາຊົນ, ລາຍງານການເຄື່ອນໄຫວວຽກງານ ຕໍ່ປະຊາຊົນໃນເຂດເລືອກຕັ້ງຂອງຕົນ, ເກັບກຳ ແລະ ນຳເອົາຄວາມຄິດຄວາມເຫັນ ແລະ ຄຳສະເໜີຂອງປະຊາຊົນເພື່ອສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງພິຈາລະນາ, ແກ້ໄຂ ທັງຕິດຕາມຜົນການແກ້ໄຂ;

7. ໃຫ້ຄຳປຶກສາ ແລະ ຄຳແນະນຳແກ່ພົນລະເມືອງ ກ່ຽວກັບການຍື່ນຄຳຮ້ອງທຸກ ແລະ ບັນຫາທີ່ຕິດພັນກັບຜົນປະໂຫຍດຂອງປະຊາຊົນ;

8. ເຂົ້າຮ່ວມ ກອງປະຊຸມ, ການເຄື່ອນໄຫວ ແລະ ຂະບວນການຕ່າງໆ ເປັນຕົ້ນ ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ວຽກງານສາມສ້າງ ໃນທ້ອງຖິ່ນ;

9. ໄດ້ຮັບ ຫຼື ສະເໜີເອົາ ຂໍ້ມູນ ຂ່າວສານ ທີ່ຈຳເປັນຈາກພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;

10. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ ເປັນລາຍລັກອັກສອນໃຫ້ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ທີ່ຕົນສັງກັດ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 (ປັບປຸງ) ການສັງກັດ, ການຄອບຕຳແໜ່ງ ແລະ ການຍົກຍ້າຍ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ແຕ່ລະທ່ານ ສັງກັດຢູ່ໃນ ໜຶ່ງ ຫຼື ສອງ ຄະນະກຳມະການ ແລະ ການຈັດຕັ້ງອື່ນ ຂອງສະພາປະຊາຊົນຂັ້ນແຂວງ, ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳການ ຫຼື ຄອບຕຳແໜ່ງ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ຖືກຍົກຍ້າຍບ່ອນປະຈຳການ ໃຫ້ປະຕິບັດ ດັ່ງນີ້:

1. ໄປປະຈຳການຢູ່ຂັ້ນແຂວງຂອງຕົນ ຍັງຮັກສາເຂດເລືອກຕັ້ງ ຂອງຕົນໄວ້ຄືເກົ່າ;

2. ໄປປະຈຳການຢູ່ເມືອງອື່ນພາຍໃນແຂວງ ໃຫ້ຖືເອົາເມືອງນັ້ນ ເປັນເຂດເລືອກຕັ້ງຂອງຕົນ ໃນກໍລະນີຍົກຍ້າຍກັບຄືນມາປະຈຳການຢູ່ບ່ອນເກົ່າ ໃຫ້ຖືເອົາເຂດເລືອກຕັ້ງເດີມ ທີ່ຜູ້ກ່ຽວໄດ້ຮັບສະໝັກເລືອກຕັ້ງ.

**ມາດຕາ 29 (ປັບປຸງ) ນະໂຍບາຍຕໍ່ສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ຮັບນະໂຍບາຍ ເຊັ່ນ ເງິນອຸດໜູນ, ເງິນເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງສະພາປະຊາຊົນຂັ້ນແຂວງ, ການກວດສຸຂະພາບ ແລະ ນະໂຍບາຍອື່ນ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເປັນ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ ເມື່ອຮອດອາຍຸກະສຽນບຳນານ ກໍໃຫ້ປະຕິບັດຕາມກົດໝາຍ, ແຕ່ໃຫ້ສືບຕໍ່ປະຕິບັດໜ້າທີ່ສະມາຊິກສະພາປະຊາຊົນຂັ້ນແຂວງໃນເຂດເລືອກຕັ້ງຂອງຕົນ ໃຫ້ໝົດອາຍຸການຂອງສະພາປະຊາຊົນຂັ້ນແຂວງ ຊຸດນັ້ນ.

ສຳລັບນະໂຍບາຍໃນແຕ່ລະດ້ານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30 (ປັບປຸງ) ອະພິສິດຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີອະພິສິດຕາມກົດໝາຍ ຈະບໍ່ຖືກ ດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ແລະ ສະຖານທີ່ເຮັດວຽກ ຂອງຕົນ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ຖ້າຫາກວ່າມີຄວາມຈຳເປັນ ຕ້ອງໄດ້ ຈັບຕົວ, ກັກຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ແລະ ສະຖານທີ່ເຮັດວຽກ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ກ່ຽວຂ້ອງ ທີ່ໄດ້ຈັບຕົວ, ກັກຕົວ ຫຼື ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ແລະ ສະຖານທີ່ເຮັດວຽກ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ຕ້ອງລາຍງານໃນທັນທີ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ຈະບໍ່ຖືກໄລ່ອອກ ຫຼື ບັງຄັບໃຫ້ອອກ ຈາກອົງການ, ການຈັດຕັ້ງບ່ອນສະມາຊິກສະພາປະຊາຊົນຂັ້ນແຂວງສັງກັດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ໃນໄລຍະການສືບສວນ-ສອບສວນນັ້ນ ສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ຖືກດຳເນີນຄະດີ ຍັງມີສິດເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງໄດ້ ແຕ່ຕ້ອງໄດ້ຮັບການເຫັນດີ ຈາກຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 31 ການສິ້ນສຸດການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ**

ການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຈະສິ້ນສຸດໃນກໍລະນີ ດັ່ງນີ້:

1. ໝົດອາຍຸການຂອງສະພາປະຊາຊົນຂັ້ນແຂວງຊຸດນັ້ນ;
2. ລາອອກ ດ້ວຍເຫດຜົນຈຳເປັນ;
3. ບໍ່ສາມາດປະຕິບັດໜ້າທີ່ໄດ້ ດ້ວຍເຫດຜົນທາງສຸຂະພາບ ໂດຍມີການຢັ້ງຢືນຈາກຄະນະແພດ;
4. ໄປປະຕິບັດໜ້າທີ່ຢູ່ຕ່າງປະເທດ ຫຼື ສຶກສາຢູ່ພາຍໃນ ຫຼື ຕ່າງປະເທດ ເປັນປະຈຳແຕ່ ສາມປີຂຶ້ນໄປ;
5. ໄປປະຈຳການ ຢູ່ ສູນກາງ ຫຼື ຕ່າງແຂວງ;

6. ຖືກປົດອອກຈາກການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ;

7. ເສຍຊີວິດ;

8. ສະພາປະຊາຊົນຂັ້ນແຂວງຖືກຍຸບ.

## ໝວດທີ 2
## ຄະນະປະຈຳສະພາປະຊາຊົນຂັ້ນແຂວງ

**ມາດຕາ 32 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການປະຈຳການຂອງສະພາປະຊາຊົນຂັ້ນແຂວງ, ມີພາລະບົດບາດນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ແທນສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໃນເວລາສະພາປະຊາຊົນຂັ້ນແຂວງບໍ່ໄດ້ເປີດກອງປະຊຸມ.

**ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດ້ານການສ້າງ ແລະ ປັບປຸງນິຕິກຳ

1.1. ສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ ແຜນການ, ການສ້າງ ແລະ ປັບປຸງ ນິຕິກຳທີ່ມີຜົນບັງຄັບທົ່ວໄປ ຂອງທ້ອງຖິ່ນ;

1.2. ອອກມະຕິ, ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ວຽກງານອື່ນ ທີ່ຕົນຮັບຜິດຊອບ;

1.3. ສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ຍົກເລີກນິຕິກຳໃຕ້ກົດໝາຍ ຂອງຂະແໜງການຂັ້ນສູນກາງ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ

2.1. ດ້ານການເມືອງ ແລະ ການປົກຄອງ

2.1.1. ສະເໜີແຜນການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ;

2.1.2. ພິຈາລະນາ, ຮັບຮອງເອົາ ໂຄງການຈັດສັນທີ່ມີການຍົກຍ້າຍປະຊາຊົນ ແຕ່ຊາວຄອບຄົວ ຫາ ໜຶ່ງຮ້ອຍຄອບຄົວ ພາຍໃນເມືອງ ຫຼື ຈາກເມືອງ, ນະຄອນ, ເທດສະບານ ໜຶ່ງ ຫາ ເມືອງ, ນະຄອນ, ເທດສະບານ ອື່ນ ພາຍໃນແຂວງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

2.1.3. ພົວພັນ ຮ່ວມມື ກັບການຈັດຕັ້ງສະພາປະຊາຊົນທ້ອງຖິ່ນຂອງຕ່າງປະເທດ;

2.1.4. ລາຍງານ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ກ່ຽວກັບການປະຕິບັດໜ້າທີ່ວຽກງານ ຂອງຕົນໃນລະຫວ່າງ ສອງກອງປະຊຸມ;

2.1.5. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ແຜນການເຄື່ອນໄຫວວຽກງານ ຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ພາກ ບ່ອນອົງການດັ່ງກ່າວຕັ້ງຢູ່;

2.1.6. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ແຜນການເຄື່ອນໄຫວວຽກງານ ຂອງສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດກາລັດ ຂັ້ນແຂວງ ແລະ ອົງການກວດສອບປະຈຳພາກ;

2.1.7. ກະກຽມ ແລະ ຮຽກໂຮມ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຮ່ວມກັບອົງການອຳນາດລັດຂັ້ນແຂວງ.

2.2. ດ້ານເສດຖະກິດ-ສັງຄົມ

2.2.1. ຄົ້ນຄວ້າແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ການຈັດສັນງົບປະມານລະຫວ່າງອົງການລັດຂັ້ນແຂວງ, ການດັດແກ້ແຜນການລົງທຶນຂອງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ ຂອງທ້ອງຖິ່ນ;

2.2.2. ສົມທົບກັບອົງການປົກຄອງຂັ້ນແຂວງ ສ້າງແຜນການຈັດເກັບລາຍຮັບ ລາຍຈ່າຍ ປະຈຳປີຂອງທ້ອງຖິ່ນ ແລ້ວມອບໃຫ້ອົງການປົກຄອງຂັ້ນແຂວງ ສະເໜີຕໍ່ລັດຖະບານ;

2.2.3. ຄົ້ນຄວ້າ ແຜນການແບ່ງປັນງົບປະມານປະຈຳປີຂອງທ້ອງຖິ່ນ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

2.2.4. ຄົ້ນຄວ້າ ແຜນພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ຂອງປະຊາຊົນໃນທ້ອງຖິ່ນ.

2.3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

2.3.1. ດ້ານການຈັດຕັ້ງ

2.3.1.1. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາການ ສ້າງຕັ້ງ, ໂຮມເຂົ້າ, ຍຸບເລີກ ກົງຈັກທີ່ສະພາປະຊາຊົນຂັ້ນແຂວງ;

2.3.1.2. ສ້າງຕັ້ງ, ໂຮມເຂົ້າ, ຍຸບເລີກ ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ;

2.3.1.3. ແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ກະກຽມການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງຊຸດໃໝ່.

2.3.2. ດ້ານບຸກຄະລາກອນ

2.3.2.1. ສະເໜີ ເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ສະພາປະຊາຊົນຂັ້ນແຂວງ, ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

2.3.2.2. ສະເໜີ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

2.3.2.3. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການ ສະພາປະຊາຊົນຂັ້ນແຂວງ;

2.3.2.4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການ, ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາປະຊາຊົນຂັ້ນແຂວງ, ຫົວໜ້າ ແລະ ຮອງຫົວໜ້າຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ;

2.3.2.5. ພິຈາລະນາ, ຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານປະຊາຊົນ ພາກ, ນະຄອນຫຼວງ, ແຂວງ, ເຂດ ແລະ ຜູ້ພິພາກສາ ຂອງສານປະຊາຊົນດັ່ງກ່າວ ບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່;

2.3.2.6. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ;

2.3.2.7. ພິຈາລະນາ, ຮັບຮອງເອົາ ການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເປັນລາຍບຸກຄົນທີ່ດຳລົງຕຳແໜ່ງ ໂດຍສະພາປະຊາຊົນຂັ້ນແຂວງ;

2.3.2.8. ແຕ່ງຕັ້ງ ສະມາຊິກສະພາປະຊາຊົນຂັ້ນແຂວງ ສັງກັດໃນຄະນະກຳມະການ;

2.3.2.9. ພິຈາລະນາຕົກລົງ ການຍົກຍ້າຍ ສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳການໄປຮັບໜ້າທີ່ອື່ນ ແລະ ການຍ້ອງຍໍ ສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ມີຜົນງານ;

3. ດ້ານການຕິດຕາມກວດກາ

3.1. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິກອງ

ປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງຕົນ;

3.2. ຕິດຕາມ ກວດກາ ການເຄື່ອນໄຫວວຽກງານຂອງ ສານປະຊາຊົນ, ອົງການໄອຍະການປະຊາຊົນຂັ້ນແຂວງ, ພາກ, ອົງການກວດສອບປະຈຳພາກ, ອົງການກວດກາລັດ, ອົງການສືບສວນ-ສອບສວນ, ອົງການປະຕິບັດຄຳຕັດສິນຂອງສານ ຂັ້ນແຂວງ ບ່ອນທີ່ອົງການດັ່ງກ່າວຕັ້ງຢູ່;

3.3. ໂຈະການຈັດຕັ້ງປະຕິບັດນິຕິກຳ ຂອງອົງການລັດຂັ້ນແຂວງຂອງຕົນ ທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລ້ວນຳສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ;

3.4. ຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.5. ຕິດຕາມ ກວດກາ ການໂຄສະນາ ເຜີຍແຜ່, ການປະເມີນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນ ຕາມຄວາມຮັບຜິດຊອບຂອງຕົນ.

### ມາດຕາ 34 ໂຄງປະກອບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະກອບດ້ວຍ:

1. ປະທານ;
2. ຮອງປະທານ;
3. ກຳມະການ.

ປະທານ ແລະ ຮອງປະທານ ສະພາປະຊາຊົນຂັ້ນແຂວງ ເປັນທັງ ປະທານ ແລະ ຮອງປະທານ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

### ມາດຕາ 35 ການແບ່ງຄວາມຮັບຜິດຊອບ ພາຍໃນຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮັບຜິດຊອບລວມ, ນຳພາ ຊີ້ນຳ ວຽກງານຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະມອບໝາຍໃຫ້ ຮອງປະທານ ຫຼື ກຳມະການຄະນະປະຈຳ ທ່ານໃດໜຶ່ງ ເຮັດໜ້າທີ່ແທນ ໃນເວລາປະທານຕິດຂັດ.

ຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ຊ່ວຍປະທານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຜູ້ຊີ້ນຳວຽກງານໃດໜຶ່ງ ແລະ ຮັບຜິດຊອບວຽກງານອື່ນ ຕາມການມອບໝາຍຂອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ກຳມະການຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ຊ່ວຍ ປະທານ ແລະ ຮອງປະທານ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງ ປະທານ ຫຼື ຮອງປະທານ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

### ມາດຕາ 36 (ປັບປຸງ) ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ

ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ ມີ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ເປັນເສນາທິການໃຫ້ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະຕິບັດພາລະບົດບາດ ໃນການປະສານສົມທົບກັບອົງການປົກຄອງຂັ້ນເມືອງ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢູ່ໃນເຂດເລືອກຕັ້ງ

ຂອງຕົນ ເປັນຕົ້ນ ການຄົ້ນຄວ້າ, ປະກອບຄໍາເຫັນ ຕໍ່ ການສ້າງ ແລະ ປັບປຸງນິຕິກໍາຂອງທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນເມືອງ, ໂຄງປະກອບກົງຈັກ ແລະ ບຸກຄະລາກອນຂັ້ນເມືອງ ແລະ ຕາແສງ.

ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈໍາເຂດເລືອກຕັ້ງຂັ້ນເມືອງ ມີຫ້ອງການ ເປັນເສນາທິການຂອງຕົນ.

ສໍາລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະສະມາຊິກສະປະຊາຊົນຂັ້ນແຂວງ ປະຈໍາເຂດເລືອກຕັ້ງຂັ້ນເມືອງ ແມ່ນ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ເປັນຜູ້ກໍານົດ.

## ໝວດທີ 3
## ປະທານ ແລະ ຮອງປະທານ ສະພາປະຊາຊົນຂັ້ນແຂວງ

### ມາດຕາ 37 (ປັບປຸງ) ປະທານສະພາປະຊາຊົນຂັ້ນແຂວງ

ປະທານສະພາປະຊາຊົນຂັ້ນແຂວງ ແມ່ນ ຫົວໜ້າສູງສຸດຂອງສະພາປະຊາຊົນຂັ້ນແຂວງ ເປັນຜູ້ນໍາພາ ແລະ ຊີ້ນໍາ ວຽກງານຂອງສະພາປະຊາຊົນຂັ້ນແຂວງ ທັງເປັນຜູ້ຕາງໜ້າສະພາປະຊາຊົນຂັ້ນແຂວງ ໃນການພົວພັນວຽກງານພາຍໃນ ແລະ ຕ່າງປະເທດ.

### ມາດຕາ 38 (ປັບປຸງ) ສິດ ແລະ ໜ້າທີ່ຂອງປະທານສະພາປະຊາຊົນຂັ້ນແຂວງ

ປະທານສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນປະທານ ຄະນະປະທານ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ປະທານກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ລົງລາຍເຊັນໃສ່ ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ເອກະສານອື່ນ ຂອງສະພາປະຊາຊົນຂັ້ນແຂວງ;
2. ນໍາພາ ຊີ້ນໍາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ຄະນະກໍາມະການ, ຫ້ອງວ່າການ ສະພາປະຊາຊົນຂັ້ນແຂວງ ແລະ ກົງຈັກທີ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງສ້າງຕັ້ງ;
3. ປຶກສາຫາລື, ປະສານສົມທົບວຽກງານສໍາຄັນຂອງທ້ອງຖິ່ນ ກັບ ປະທານຄະນະກໍາມະການປົກຄອງນະຄອນຫຼວງ, ແຂວງ;
4. ນໍາພາ ຊີ້ນໍາ ວຽກງານຕ່າງປະເທດ ຂອງສະພາປະຊາຊົນຂັ້ນແຂວງ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 39 (ປັບປຸງ) ຮອງປະທານສະພາປະຊາຊົນຂັ້ນແຂວງ

ຮອງປະທານສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ຊ່ວຍປະທານສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ຮັບຜິດຊອບວຽກງານໃດໜຶ່ງ, ເປັນຜູ້ຮັກສາການແທນ, ເປັນປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕາມການມອບໝາຍຂອງປະທານສະພາປະຊາຊົນຂັ້ນແຂວງ.

ຮອງປະທານສະພາປະຊາຊົນຂັ້ນແຂວງ ເປັນຄະນະປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ.

## ໝວດທີ 4
## ຄະນະກຳມະການສະພາປະຊາຊົນຂັ້ນແຂວງ

**ມາດຕາ 40 ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ແມ່ນ ກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ, ປະກອບດ້ວຍ ບັນດາສະມາຊິກສະພາປະຊາຊົນຂັ້ນແຂວງ, ມີພາລະບົດບາດເປັນເສນາທິການ ໃຫ້ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດວຽກງານ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະກຳມະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ ຂອງແຕ່ລະຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ.

**ມາດຕາ 41 (ປັບປຸງ) ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ ແມ່ນ ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ຊຸດນັ້ນ ພິຈາລະນາຮັບຮອງເອົາ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ ລວມຂອງຄະນະກຳມະການ**

ຄະນະກຳມະການ ມີ ສິດ ແລະ ໜ້າທີ່ລວມ ໃນການປະຕິບັດວຽກງານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສ້າງຮ່າງແຜນການ ແລະ ງົບປະມານ ການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ;
2. ຄົ້ນຄວ້າ, ກວດກາ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳ ຂອງອົງການລັດຂັ້ນແຂວງ;
3. ໂຄສະນາ ເຜີຍແຜ່ ກົດໝາຍ, ນິຕິກຳໃຕ້ກົດໝາຍ;
4. ເຂົ້າຮ່ວມແຕ່ຫົວທີ ກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປະກອບຄຳເຫັນໃສ່ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ;
5. ຄົ້ນຄວ້າການໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ, ລົບລ້າງ ນິຕິກຳ ຂອງອົງການລັດຂັ້ນແຂວງ ແລ້ວນຳສະເໜີຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ;
6. ຄົ້ນຄວ້າ ແລະ ສະເໜີບັນຫາສຳຄັນ ທີ່ມີຄວາມຫຍຸ້ງຍາກ ພາຍໃນທ້ອງຖິ່ນ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາ;
7. ຮັບຕ້ອນ ແລະ ຟັງຄຳຄິດຄຳເຫັນຂອງປະຊາຊົນ ກ່ຽວກັບບັນຫາຕ່າງໆ;
8. ປະສານສົມທົບ ລະຫວ່າງຄະນະກຳມະການດ້ວຍກັນ ຫຼື ກັບອົງການລັດຂັ້ນແຂວງ ຕາມພາລະບົດບາດຂອງຕົນ;
9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ຫຼື ຕາມການມອບໝາຍຂອງປະທານ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 43 ສິດ ແລະ ໜ້າທີ່ ສະເພາະຂອງແຕ່ລະຄະນະກຳມະການ**

ສິດ ແລະ ໜ້າທີ່ສະເພາະ ຂອງແຕ່ລະຄະນະກຳມະການ ແມ່ນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ກຳນົດ.

**ມາດຕາ 44 (ປັບປຸງ) ໂຄງປະກອບຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ໂຄງປະກອບຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີ ດັ່ງນີ້:

1. ປະທານ;
2. ຮອງປະທານ;
3. ກຳມະການ ສັງກັດຄະນະກຳມະການ;
4. ຂະແໜງການທີ່ເປັນເສນາທິການ.

**ມາດຕາ 45 (ປັບປຸງ) ການແບ່ງຄວາມຮັບຜິດຊອບ ພາຍໃນຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮັບຜິດຊອບລວມ, ນຳພາ ຊີ້ນຳ ວຽກງານຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

ຮອງປະທານຄະນະກຳມະການ ເປັນຜູ້ຊ່ວຍປະທານຄະນະກຳມະການ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຄະນະກຳມະການ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານຄະນະກຳມະການ.

ໃນກໍລະນີ ທີ່ປະທານຄະນະກຳມະການຕິດຂັດ ແມ່ນ ຮອງປະທານຄະນະກຳມະການ ເປັນຜູ້ຮັກສາການແທນ ຕາມການມອບໝາຍ ຂອງປະທານຄະນະກຳມະການ.

## ໝວດທີ 5
## ຫ້ອງວ່າການສະພາປະຊາຊົນຂັ້ນແຂວງ

**ມາດຕາ 46 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ**

ຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ແມ່ນ ກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ ມີພາລະບົດບາດ ເປັນເສນາທິການໃຫ້ ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ, ການຈັດຕັ້ງ-ພະນັກງານ ແລະ ວຽກງານອື່ນ ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ຂອງສະພາປະຊາຊົນຂັ້ນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ**

ຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ເປັນເສນາທິການໃຫ້ແກ່ ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນວຽກງານຄົ້ນຄວ້າ-ສັງລວມເນື້ອໃນ, ວຽກງານຄຸ້ມຄອງບໍລິຫານ, ແຜນການ ແລະ ການເງິນ, ວຽກງານຈັດຕັ້ງ-ພະນັກງານ.

ສິດ ແລະ ໜ້າທີ່ລະອຽດ ຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ແມ່ນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ກຳນົດ.

**ມາດຕາ 48 (ປັບປຸງ) ໂຄງປະກອບຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ**

ໂຄງປະກອບຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ມີ ດັ່ງນີ້:

1. ຫົວໜ້າຫ້ອງວ່າການ ທັງເປັນເລຂາທິການ;
2. ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ;
3. ຂະແໜງການທີ່ເປັນເສນາທິການ.

**ມາດຕາ 49 (ປັບປຸງ) ຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ**

ຫົວໜ້າຫ້ອງວ່າການ ທັງເປັນເລຂາທິການ ສະພາປະຊາຊົນຂັ້ນແຂວງ ແມ່ນ ຜູ້ນໍາພາ ຊີ້ນໍາ ຄົ້ນຄວ້າ-ສັງລວມດ້ານເນື້ອໃນວຽກງານ, ເປັນໂຄສົກຂອງ ສະພາປະຊາຊົນຂັ້ນແຂວງ ແລະ ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ ຂອງສະພາປະຊາຊົນຂັ້ນແຂວງ.

ສິດ ແລະ ໜ້າທີ່ ຂອງຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ແມ່ນ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ເປັນຜູ້ກໍານົດ.

**ມາດຕາ 50 (ປັບປຸງ) ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາປະຊາຊົນຂັ້ນແຂວງ**

ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາປະຊາຊົນຂັ້ນແຂວງ ເປັນຜູ້ຊ່ວຍຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າຫ້ອງວ່າການ.

ໃນກໍລະນີທີ່ ຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ຕິດຂັດ ແມ່ນ ຮອງຫົວໜ້າຫ້ອງວ່າການ ຫຼື ຮອງເລຂາທິການ ສະພາປະຊາຊົນຂັ້ນແຂວງ ຜູ້ທີ່ຖືກມອບໝາຍຈາກຫົວໜ້າຫ້ອງວ່າການ ເປັນຜູ້ຮັກສາການແທນ.

**ມາດຕາ 51 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການທີ່ເປັນເສນາທິການ**

ສິດ ແລະ ໜ້າທີ່ ຂອງຂະແໜງການທີ່ເປັນເສນາທິການ ຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IV
## ກອງປະຊຸມ
### ໝວດທີ 1
### ກອງປະຊຸມສະພາປະຊາຊົນຂັ້ນແຂວງ

**ມາດຕາ 52 ກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີ ສອງປະເພດກອງປະຊຸມ ດັ່ງນີ້:

1. ກອງປະຊຸມສະໄໝສາມັນ ຊຶ່ງປະກອບດ້ວຍ ກອງປະຊຸມຄັ້ງປະຖົມມະລືກ, ກອງປະຊຸມສະໄໝສາມັນ ປະຈໍາປີ, ປະຈໍາ ທຸກເດືອນຕົ້ນປີ ແລະ ກອງປະຊຸມທ້າຍສະໄໝ;
2. ກອງປະຊຸມສະໄໝວິສາມັນ.

**ມາດຕາ 53 (ປັບປຸງ) ກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນຂັ້ນແຂວງ ແມ່ນ ກອງປະຊຸມສະໄໝສາມັນ ເທື່ອທີໜຶ່ງ ຂອງສະພາປະຊາຊົນຂັ້ນແຂວງຊຸດນັ້ນ ເປີດຂຶ້ນຢ່າງຊ້າ ສາມສິບວັນ ພາຍຫຼັງສໍາເລັດກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ຊຶ່ງແມ່ນປະທານສະພາປະຊາຊົນຂັ້ນແຂວງຊຸດເກົ່າ ເປັນປະທານ ແລະ ຊີ້ນໍາກອງປະຊຸມ ຈົນກວ່າໄດ້ເລືອກຕັ້ງປະທານສະພາປະຊາຊົນຂັ້ນແຂວງຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານຂອງຄະນະກໍາມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບຜົນຂອງການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;

2. ເລືອກຕັ້ງ ປະທານສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຸດເກົ່າ;

3. ເລືອກຕັ້ງ ຮອງປະທານສະພາປະຊາຊົນຂັ້ນແຂວງ ແລະ ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງປະທານສະພາປະຊາຊົນຂັ້ນແຂວງ;

4. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

5. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ປະທານສານປະຊາຊົນພາກ ບ່ອນສານປະຊາຊົນນັ້ນຕັ້ງຢູ່, ປະທານສານປະຊາຊົນ ນະຄອນຫຼວງ, ແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

6. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ຫົວໜ້າອົງການໄອຍະການປະຊາຊົນພາກ ບ່ອນທີ່ອົງການໄອຍະການປະຊາຊົນນັ້ນຕັ້ງຢູ່, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

7. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

8. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

9. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

10. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ; ການສະເໜີ ແຕ່ງຕັ້ງ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

11. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຫ້າປີ ຂັ້ນແຂວງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

12. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

13. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງສານປະຊາຊົນພາກ, ອົງການໄອຍະການປະຊາຊົນພາກ ແລະ ອົງການກວດສອບປະຈຳພາກ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ອົງການກວດກາລັດ ຂັ້ນແຂວງ ບ່ອນອົງການດັ່ງກ່າວຕັ້ງຢູ່;

14. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ.

ໃນກໍລະນີ ນະຄອນຫຼວງ ຫຼື ແຂວງໃດໜຶ່ງ ໄດ້ດຳເນີນການປັບປຸງໂຄງປະກອບກົງຈັກ ແລະ ບຸກຄະລາກອນ ຂອງ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ພາກ, ນະຄອນຫຼວງ, ແຂວງ ແລະ ອົງການກວດກາລັດຂັ້ນແຂວງ ກ່ອນກອງປະຊຸມປະຖົມມະລຶກ ໄລຍະເວລາ ສາມເດືອນຂຶ້ນໄປ ການພິຈາລະນາ, ຮັບຮອງເອົາກົງຈັກ ແລະ ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 4, 5, 6, 7 ແລະ ຂໍ້ 10 ຂອງມາດຕານີ້ ໃຫ້ດຳເນີນໃນກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນຂັ້ນແຂວງ ຊຸດເກົ່າທີ່ໃກ້ນັ້ນ.

**ມາດຕາ 54 (ປັບປຸງ) ກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ ປະຈຳປີຜ່ານມາ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນແຂວງ ປະຈຳປີຕໍ່ໜ້າ;

2. ພິຈາລະນາ, ຮັບຮອງເອົາ ບົດລາຍງານຜົນຂອງການກວດສອບ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ ຂອງອົງການກວດສອບປະຈຳພາກ ທີ່ກ່ຽວຂ້ອງກັບແຂວງນັ້ນ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າຂອງ ສານປະຊາຊົນ, ອົງການໄອຍະການປະຊາຊົນ ພາກ, ນະຄອນຫຼວງ, ແຂວງ, ອົງການກວດກາລັດຂັ້ນແຂວງ, ອົງການກວດສອບປະຈຳພາກບ່ອນທີ່ອົງການດັ່ງກ່າວນັ້ນຕັ້ງຢູ່;

4. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ ຂອງສະພາປະຊາຊົນຂັ້ນແຂວງ;

5. ຮັບຟັງການປະກອບຄຳເຫັນ ຂອງແນວລາວສ້າງຊາດຂັ້ນແຂວງ ກ່ຽວກັບການປະຕິບັດໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ;

6. ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳທີ່ມີຜົນບັງຄັງທົ່ວໄປຂອງທ້ອງຖິ່ນ;

7. ຊັກຖາມ ຄະນະປະຈຳ, ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການ ສະພາປະຊາຊົນຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ, ປະທານອົງການກວດສອບປະຈຳພາກ;

8. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ.

ສຳລັບກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນຂັ້ນແຂວງ ແຕ່ລະຊຸດ ເປັນກອງປະຊຸມກາງສະໄໝ. ນອກຈາກ ເນື້ອໃນກອງປະຊຸມປະຈຳປີ ຍັງມີເນື້ອໃນ ດັ່ງນີ້:

1) ບົດລາຍງານການເຄື່ອນໄຫວວຽກງານກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ;

2) ການປະເມີນການຈັດຕັ້ງປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

3) ເນື້ອໃນອື່ນ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 55 (ປັບປຸງ) ກອງປະຊຸມສະໄໝສາມັນປະຈຳຫົກເດືອນຕົ້ນປີ ຂອງສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະໄໝສາມັນປະຈຳຫົກເດືອນຕົ້ນປີ ຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ ຫົກເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນແຂວງ ຫົກເດືອນທ້າຍປີ; ການດັດແກ້ແຜນງົບປະມານແຫ່ງລັດ ຂັ້ນແຂວງ ປະຈຳປີ ໃນກໍລະນີຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ສະເໜີມາ;

2. ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳທີ່ມີຜົນບັງຄັບທົ່ວໄປຂອງທ້ອງຖິ່ນ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໃນລະຫວ່າງສອງກອງປະຊຸມ ແລະ ທິດທາງແຜນການໃນຕໍ່ໜ້າ ຂອງສະພາປະຊາຊົນຂັ້ນແຂວງ;

4. ຮັບຟັງການລາຍງານຂອງ ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ພາກ, ປະທານອົງການກວດສອບແຫ່ງລັດ ປະຈຳພາກ ບ່ອນທີ່ອົງການດັ່ງກ່າວນັ້ນຕັ້ງຢູ່, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

5. ຮັບຟັງການລາຍງານບັນຫາໃດໜຶ່ງທີ່ພົ້ນເດັ່ນ ຈາກຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

6. ຊັກຖາມ ຄະນະປະຈຳ, ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການ ສະພາປະຊາຊົນຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ, ປະທານອົງການກວດສອບປະຈຳພາກ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

7. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ.

### ມາດຕາ 56 ກອງປະຊຸມສະໄໝວິສາມັນຂອງສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະໄໝວິສາມັນຂອງສະພາປະຊາຊົນຂັ້ນແຂວງ ແມ່ນ ກອງປະຊຸມສະພາປະຊາຊົນຂັ້ນແຂວງທີ່ເປີດຂຶ້ນ ໃນລະຫວ່າງສອງກອງປະຊຸມສະໄໝສາມັນ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຕາມການສະເໜີຂອງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຫຼື ສະມາຊິກສະພາປະຊາຊົນຂັ້ນແຂວງ ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກທັງໝົດ ເພື່ອພິຈາລະນາ, ຕົກລົງບັນຫາທີ່ຈຳເປັນ ແລະ ຮີບດ່ວນ.

### ມາດຕາ 57 (ປັບປຸງ) ກອງປະຊຸມທ້າຍສະໄໝ

ກອງປະຊຸມທ້າຍສະໄໝ ແມ່ນ ກອງປະຊຸມສະໄໝສາມັນເປີດຂຶ້ນເປັນເທື່ອສຸດທ້າຍ ຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ພິຈາລະນາ, ຮັບຮອງເອົາ ວຽກງານປະຈຳປີ ແລະ ວຽກງານ ຫ້າປີ ດັ່ງນີ້:

1. ວຽກງານປະຈຳປີ ໃຫ້ປະຕິບັດຕາມມາດຕາ 54 ຂອງກົດໝາຍສະບັບນີ້;
2. ວຽກງານຫ້າປີ
   - 2.1. ບົດລາຍງານການເຄື່ອນໄຫວວຽກງານ ຫ້າປີ ຂອງສະພາປະຊາຊົນຂັ້ນແຂວງ;
   - 2.2. ຈັດຕັ້ງການມອບໃບຍັ້ງຢືນການສຳເລັດໜ້າທີ່ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ.
3. ເນື້ອໃນອື່ນ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

### ມາດຕາ 58 (ປັບປຸງ) ຫຼັກການດຳເນີນກອງປະຊຸມສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະດຳເນີນໄດ້ກໍຕໍ່ເມື່ອ ມີສະມາຊິກສະພາປະຊາຊົນຂັ້ນແຂວງເຂົ້າຮ່ວມ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ດຳເນີນຢ່າງເປີດເຜີຍ ພາຍໃຕ້ການຄວບຄຸມ ແລະ ຊີ້ນຳຂອງປະທານ ຫຼື ຮອງປະທານຜູ້ໄດ້ຮັບມອບໝາຍ ຈາກປະທານສະພາປະຊາຊົນຂັ້ນແຂວງ.

ໃນກໍລະນີຈຳເປັນ ສະພາປະຊາຊົນຂັ້ນແຂວງ ອາດຈະດຳເນີນກອງປະຊຸມສະເພາະພາຍໃນຂອງຕົນ ກໍໄດ້ ຕາມການສະເໜີຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຫຼື ໜຶ່ງສ່ວນສີ່ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງກອງເລຂານຸການ ເປັນຜູ້ຊ່ວຍວຽກ.

### ມາດຕາ 59 (ປັບປຸງ) ການຮຽກໂຮມກອງປະຊຸມສະພາປະຊາຊົນຂັ້ນແຂວງ

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮຽກໂຮມກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ເອກະສານທີ່ຈະນຳເຂົ້າພິຈາລະນາ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕ້ອງສົ່ງໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ຢ່າງຊ້າ ຫ້າວັນ ກ່ອນວັນເປີດກອງປະຊຸມ.

### ມາດຕາ 60 (ປັບປຸງ) ຜູ້ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ

ຜູ້ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ ມີ ສະມາຊິກສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ພາກ, ປະທານອົງການກວດສອບປະຈຳພາກ, ຜູ້ຕາງໜ້າອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ, ນອກຈາກນີ້ ອາດຈະເຊີນ ອະດີດການນຳຂັ້ນສູງ, ອະດີດສະມາຊິກສະພາປະຊາຊົນຂັ້ນແຂວງ, ອົງການຈັດຕັ້ງສັງຄົມ, ຕົວແທນຊົ້ນຄົນຕ່າງໆ ແລະ ຕົວແທນອົງການຈັດຕັ້ງຕ່າງປະເທດ ຢູ່ ນະຄອນຫຼວງ, ແຂວງ ເຂົ້າຮ່ວມ.

ສຳລັບ ຜູ້ເຂົ້າຮ່ວມທີ່ບໍ່ແມ່ນສະມາຊິກສະພາປະຊາຊົນຂັ້ນແຂວງນັ້ນ ອາດຈະໄດ້ຮັບອະນຸຍາດ ຈາກປະທານກອງປະຊຸມ ໃຫ້ປະກອບຄວາມຄິດຄວາມເຫັນໃນກອງປະຊຸມ ແຕ່ຫາກບໍ່ມີສິດລົງຄະແນນສຽງ.

ສຳລັບ ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ພາກ, ປະທານອົງການກວດສອບປະຈຳພາກ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ຕ້ອງເຂົ້າຮ່ວມຕະຫຼອດວາລະກອງປະຊຸມ. ໃນກໍລະນີຈຳເປັນ ຫາກບໍ່ສາມາດເຂົ້າຮ່ວມໄດ້ ໃຫ້ມອບສິດເປັນລາຍລັກອັກສອນ ໃຫ້ຜູ້ຮອງຂອງຕົນ ເປັນຜູ້ເຂົ້າຮ່ວມແທນ ໂດຍແຈ້ງໃຫ້ສະພາປະຊາຊົນຂັ້ນແຂວງ ຮູ້ລ່ວງໜ້າ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ຜູ້ເຂົ້າຮ່ວມອື່ນ ຕ້ອງປະຕິບັດຕາມລະບຽບການ ແລະ ວາລະຂອງກອງປະຊຸມ ທີ່ໄດ້ວາງອອກຢ່າງເຂັ້ມງວດ.

### ມາດຕາ 61 ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ

ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ເປັນນິຕິກຳປະເພດໜຶ່ງ ທີ່ມີຜົນບັງຄັບໃຊ້ທົ່ວທ້ອງຖິ່ນ ຊຶ່ງສັງລວມບັນຫາສຳຄັນຕ່າງໆ ທີ່ກອງປະຊຸມໄດ້ຕົກລົງຮັບຮອງເອົາ.

ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ຖືກຮັບຮອງເອົາດ້ວຍການລົງຄະແນນສຽງ ຢ່າງເປີດເຜີຍ ຫຼື ປິດລັບ ຕາມການຕົກລົງຂອງກອງປະຊຸມ.

ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ.

### ມາດຕາ 62 ບົດບັນທຶກຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແຕ່ລະເທື່ອ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຢັ້ງຢືນຂອງຫົວໜ້າກອງເລຂານຸການ ແລະ ປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ.

## ໝວດທີ 2
## ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ

**ມາດຕາ 63 (ປັບປຸງ) ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ສາມປະເພດ ດັ່ງນີ້:

1. ກອງປະຊຸມສະໄໝສາມັນ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮຽກໂຮມ ແລະ ນຳພາກອງປະຊຸມ;

2. ກອງປະຊຸມສະໄໝວິສາມັນ ເປີດຂຶ້ນຕາມການຕົກລົງຂອງ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມການມອບໝາຍຂອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທັງໝົດ;

3. ກອງປະຊຸມຮ່ວມກັບອົງການປົກຄອງຂັ້ນແຂວງ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດກາລັດ ແລະ ພາກສ່ວນອື່ນ ຂັ້ນແຂວງ ທີ່ກ່ຽວຂ້ອງ ເປີດຂຶ້ນຢ່າງໜ້ອຍ ປີລະຄັ້ງ ຕາມການຕົກລົງຂອງ ປະທານ ຫຼື ຮອງປະທານ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ຜູ້ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ບຸກຄະລາກອນອົງການປົກຄອງຂັ້ນແຂວງ, ການນຳຂອງອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ. ການນຳຂອງອົງການຈັດຕັ້ງ ຫຼື ບຸກຄົນດັ່ງກ່າວ ມີສິດອອກຄຳເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

ໃນກໍລະນີ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຂັດ ແມ່ນ ຮອງປະທານຜູ້ທີ່ຖືກມອບໝາຍຈາກປະທານນັ້ນ ເປັນຜູ້ຮຽກໂຮມ ແລະ ນຳພາກອງປະຊຸມ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີກຳມະການ ຢ່າງໜ້ອຍສອງສ່ວນສາມ ເຂົ້າຮ່ວມ.

**ມາດຕາ 64 (ປັບປຸງ) ເນື້ອໃນກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະໄໝສາມັນ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາບັນຫາສຳຄັນ, ມີຈຸດສຸມ ທີ່ຕິດພັນກັບສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ ໃນເວລາສະພາປະຊາຊົນຂັ້ນແຂວງບໍ່ໄດ້ເປີດກອງປະຊຸມ.

ສຳລັບເນື້ອໃນກອງປະຊຸມສະໄໝວິສາມັນ ແລະ ກອງປະຊຸມຮ່ວມ ແມ່ນ ພິຈາລະນາ ເນື້ອໃນທີ່ຈຳເປັນ ແລະ ຮີບດ່ວນ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ບັນດາເນື້ອໃນ ທີ່ນຳເຂົ້າກອງປະຊຸມ ຕ້ອງແຈ້ງ ແລະ ສົ່ງໃຫ້ກຳມະການຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ລວມທັງແຂກທີ່ຖືກເຊີນ ຊາບລ່ວງໜ້າຢ່າງຊ້າ ສາມວັນ ກ່ອນວັນເປີດກອງປະຊຸມ.

**ມາດຕາ 65 (ປັບປຸງ) ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ບັນຫາສຳຄັນຕ່າງໆ ທີ່ນຳມາພິຈາລະນາ ຢູ່ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕ້ອງອອກມະຕິຮັບຮອງເອົາ.

ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນກຳມະການ ທີ່ເຂົ້າຮ່ວມກອງປະຊຸມ.

ຜົນຂອງກອງປະຊຸມ ຕ້ອງແຈ້ງໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ ຕາມແຕ່ລະກໍລະນີ.

ມາດຕາ 66 (ປັບປຸງ) ປຶ້ມບັນທຶກກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແຕ່ລະເທື່ອ ຕ້ອງມີປຶ້ມບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ ພາຍໃນກຳນົດເວລາ ບໍ່ເກີນ ຫ້າວັນ ລັດຖະການ.

## ໝວດທີ 3
## ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ

ມາດຕາ 67 ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ

ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີ ສອງປະເພດ ດັ່ງນີ້:

1. ກອງປະຊຸມຄະນະກຳມະການ;
2. ກອງປະຊຸມຄົບຄະນະ ຂອງຄະນະກຳມະການ.

ມາດຕາ 68 (ປັບປຸງ) ກອງປະຊຸມຄະນະກຳມະການ

ກອງປະຊຸມຄະນະກຳມະການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ເປີດຂຶ້ນ ຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານຄະນະກຳມະການ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີ ຮອງປະທານ, ກຳມະການປະຈຳຄະນະກຳມະການ, ຂະແໜງການທີ່ເປັນເສນາທິການ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມຄະນະກຳມະການ ມີເນື້ອໃນ ດັ່ງນີ້:

1. ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳເດືອນຕໍ່ໜ້າ ຂອງຄະນະກຳມະການ;

2. ຄົ້ນຄວ້າ ສ້າງຮ່າງນິຕິກຳທີ່ພົວພັນກັບວຽກງານຂອງຄະນະກຳມະການຕົນ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາຄະນະກຳມະການອື່ນ ຫຼື ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3. ປຶກສາຫາລື ການປະຕິບັດວຽກງານຕົວຈິງ ເປັນຕົ້ນ ເນື້ອໃນ, ວິທີການ ແລະ ຮູບການຕິດຕາມກວດກາໃນຂົງເຂດ ທີ່ຄະນະກຳມະການຮັບຜິດຊອບ;

4. ຄົ້ນຄວ້າ, ວິໄຈ ສະພາບການ, ບັນຫາທີ່ພົ້ນເດັ່ນ ທີ່ພົວພັນກັບຄະນະກຳມະການຕົນ ແລະ ສະເໜີມາດຕະການແກ້ໄຂ ເພື່ອລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ໃຫ້ທິດຊີ້ນຳ;

5. ຮັບຟັງການລາຍງານຂອງພະແນກ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ ທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳຄິດຄຳເຫັນ, ໃຫ້ຄຳແນະນຳ ກ່ຽວກັບການແກ້ໄຂບັນຫາທີ່ຍັງຄ້າງຄາ;

6. ກະກຽມ ກອງປະຊຸມຄົບຄະນະຂອງຄະນະກຳມະການ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ວຽກງານອື່ນ ທີ່ຈຳເປັນ;

7. ຄົ້ນຄວ້າ, ພິຈາລະນາ ການບຳລຸງສ້າງ, ການຝຶກອົບຮົມ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງພະນັກງານ ຂອງຂະແໜງການທີ່ເປັນເສນາທິການ ແລະ ໜ່ວຍງານ ຕາມການສະເໜີຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ;

8. ມີເນື້ອໃນອື່ນ ຖ້າເຫັນວ່າມີຄວາມຈຳເປັນ.

ມາດຕາ 69 (ປັບປຸງ) ກອງປະຊຸມຄົບຄະນະກຳມະການ

ກອງປະຊຸມຄົບຄະນະຂອງຄະນະກຳມະການ ແມ່ນ ກອງປະຊຸມປຶກສາຫາລືວຽກງານປະຈຳປີ ເປີດຂຶ້ນຢ່າງໜ້ອຍປີລະເທື່ອ ໂດຍການຮຽກໂຮມ ແລະ ການເປັນປະທານຂອງປະທານຄະນະກຳມະການທີ່ກ່ຽວຂ້ອງ ຕາມການ

ເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຶ່ງມີກຳມະການສັງກັດຄະນະກຳມະການ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນກຳມະການທັງໝົດ.

ກອງປະຊຸມຄົບຄະນະຂອງຄະນະກຳມະການ ໃຫ້ເປີດຂຶ້ນ ກ່ອນກອງປະຊຸມສະໄໝສາມັນ ປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ ຫຼື ຈະເປີດຮ່ວມກັບຄະນະກຳມະການອື່ນ ແລະ ເຊີນບຸກຄົນ, ຄະນະກຳມະການອື່ນ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມນຳກໍໄດ້ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຄົບຄະນະຂອງຄະນະກຳມະການພິຈາລະນາບັນຫາຕ່າງໆ ເປັນຕົ້ນ ບົດລາຍງານການເຄື່ອນ ໄຫວວຽກງານໃນປີຜ່ານມາ ແລະ ທິດທາງແຜນການວຽກງານໃນປີຕໍ່ໜ້າ ຂອງຄະນະກຳມະການ, ບົດລາຍງານ ຜົນການຕິດຕາມກວດກາ, ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງກົດໝາຍ, ຮ່າງນິຕິກຳ ແລະ ວຽກງານອື່ນ ໃນຂົງເຂດ ທີ່ຕົນຮັບຜິດຊອບ.

**ມາດຕາ 70 (ປັບປຸງ) ມະຕິກອງປະຊຸມຄົບຄະນະຂອງຄະນະກຳມະການ**

ບັນຫາສຳຄັນຕ່າງໆ ທີ່ນຳມາພິຈາລະນາໃນກອງປະຊຸມຄົບຄະນະຂອງຄະນະກຳມະການຕ້ອງອອກມະຕິ ຮັບຮອງເອົາ.

ມະຕິກອງປະຊຸມຄົບຄະນະຂອງຄະນະກຳມະການ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍ ກວ່າເຄິ່ງໜຶ່ງ ຂອງຈຳນວນກຳມະການ ທີ່ເຂົ້າຮ່ວມກອງປະຊຸມ.

ຜົນຂອງກອງປະຊຸມ ຕ້ອງລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ແຈ້ງໃຫ້ສະມາຊິກ ສະພາປະຊາຊົນຂັ້ນແຂວງຊາບ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ ຕາມແຕ່ລະກໍລະນີ.

**ມາດຕາ 71 (ປັບປຸງ) ບົດບັນທຶກກອງປະຊຸມຄົບຄະນະຂອງຄະນະກຳມະການ**

ກອງປະຊຸມຄົບຄະນະຂອງຄະນະກຳມະການ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ ພາຍໃນກຳນົດເວລາ ບໍ່ເກີນ ຫ້າວັນ ລັດຖະການ, ພ້ອມທັງລາຍງານ ຜົນຂອງກອງປະຊຸມໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ສິບວັນ ລັດຖະການ.

## ໝວດທີ 4
## ກອງປະຊຸມຫ້ອງວ່າການສະພາປະຊາຊົນຂັ້ນແຂວງ

**ມາດຕາ 72 (ປັບປຸງ) ກອງປະຊຸມຫ້ອງວ່າການສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ມີ ສອງປະເພດ ດັ່ງນີ້:

1. ກອງປະຊຸມປະຈຳເດືອນ ຫ້ອງວ່າການ;
2. ກອງປະຊຸມປະຈຳປີ ຫ້ອງວ່າການ.

**ມາດຕາ 73 (ປັບປຸງ) ກອງປະຊຸມປະຈຳເດືອນ ຫ້ອງວ່າການ**

ກອງປະຊຸມປະຈຳເດືອນ ຫ້ອງວ່າການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນ ຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນ ຫົວໜ້າຫ້ອງວ່າການ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີ ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ, ຫົວໜ້າຂະແໜງ ແລະ ຫົວໜ້າໜ່ວຍງານ ເຂົ້າຮ່ວມ.

ກອງປະຊຸມປະຈຳເດືອນ ຫ້ອງວ່າການ ມີເນື້ອໃນ ດັ່ງນີ້:

1. ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳເດືອນຜ່ານມາ ແລະ ແຜນການເຄື່ອນໄຫວວຽກ ງານປະຈຳເດືອນຕໍ່ໜ້າ ຂອງຫ້ອງວ່າການ;
2. ຄົ້ນຄວ້າ ສ້າງຮ່າງນິຕິກຳ ທີ່ພົວພັນກັບວຽກງານຂອງຫ້ອງວ່າການ;

3. ຮັບການສ່ອງແສງຂອງຂະແໜງການທີ່ເປັນເສນາທິການ ແລະ ໜ່ວຍງານ ພາຍໃນສະພາປະຊາຊົນຂັ້ນແຂວງ;

4. ປຶກສາຫາລື ການປະຕິບັດວຽກງານຄົ້ນຄວ້າ-ສັງລວມເນື້ອໃນ ແລະ ວຽກງານຄຸ້ມຄອງບໍລິຫານ, ແຜນການ ແລະ ການເງິນ;

5. ກະກຽມ ກອງປະຊຸມວຽກງານຫ້ອງວ່າການ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ວຽກງານອື່ນ ທີ່ຈຳເປັນ;

6. ຄົ້ນຄວ້າ, ພິຈາລະນາ ການບຳລຸງ ສ້າງ, ການຝຶກອົບຮົມ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງ ພະນັກງານ ຂອງຂະແໜງການທີ່ເປັນເສນາທິການ ແລະ ໜ່ວຍງານ;

7. ມີເນື້ອໃນອື່ນ ຖ້າເຫັນວ່າມີຄວາມຈຳເປັນ.

### ມາດຕາ 74 (ປັບປຸງ) ກອງປະຊຸມປະຈຳປີ ຫ້ອງວ່າການ

ກອງປະຊຸມປະຈຳປີ ຫ້ອງວ່າການ ແມ່ນ ກອງປະຊຸມປຶກສາຫາລືວຽກງານປະຈຳປີ ໂດຍການຮຽກໂຮມ ແລະ ການເປັນປະທານ ຂອງຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຶ່ງມີ ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ, ຫົວໜ້າຂະແໜງ, ຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການ ເຂົ້າຮ່ວມ.

ກອງປະຊຸມປະຈຳປີ ຫ້ອງວ່າການ ພິຈາລະນາບັນຫາຕ່າງໆ ເປັນຕົ້ນ ບົດລາຍງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ ຂອງຫ້ອງວ່າການ ແລະ ວຽກງານອື່ນໃນຂົງເຂດທີ່ຕົນຮັບຜິດຊອບ.

### ມາດຕາ 75 (ປັບປຸງ) ບົດບັນທຶກກອງປະຊຸມຫ້ອງວ່າການສະພາປະຊາຊົນຂັ້ນແຂວງ

ກອງປະຊຸມຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ.

ຜົນຂອງກອງປະຊຸມວຽກງານຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ຕ້ອງລາຍງານ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແຈ້ງໃຫ້ຄະນະກຳມະການ, ກົງຈັກຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ ຕາມແຕ່ລະກໍລະນີ.

## ພາກທີ V
## ລະບອບວິທີເຮັດວຽກ
## ໝວດທີ 1
## ລະບອບວິທີເຮັດວຽກ

### ມາດຕາ 76 (ປັບປຸງ) ລະບອບເຮັດວຽກ

ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳ, ຄະນະກຳມະການ, ຫ້ອງວ່າການ, ກົງຈັກຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເຮັດວຽກຕາມຫຼັກການລວມສູນ ປະຊາທິປະໄຕ ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ເອົາກອງປະຊຸມເປັນບ່ອນປຶກສາຫາລື ແລະ ຕົກລົງບັນຫາຕາມສຽງສ່ວນຫຼາຍບົນພື້ນຖານ ລັດຖະທຳມະນູນ ແລະ ກົດໝາຍ.

**ມາດຕາ 77 (ປັບປຸງ) ວິທີເຮັດວຽກ**

ວິທີເຮັດວຽກຂອງສະພາປະຊາຊົນຂັ້ນແຂວງ, ຄະນະປະຈໍາ, ຄະນະກໍາມະການ, ຫ້ອງວ່າການ, ກົງຈັກທີ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງສ້າງຕັ້ງ ດໍາເນີນດ້ວຍລະບອບປະຊຸມ, ມີການແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີແຜນການ, ການກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບລາຍງານ, ຂໍຄວາມເຫັນຊີ້ນໍາຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບການຈັດຕັ້ງຕ່າງໆ ພາຍໃນສະພາປະຊາຊົນຂັ້ນແຂວງ ແລະ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ທີ່ກ່ຽວຂ້ອງ, ພົວພັນ, ຮ່ວມມືກັບການຈັດຕັ້ງລັດຖະສະພາຂອງຕ່າງປະເທດ.

## ໝວດທີ 2
## ການພົວພັນລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບ ອົງການອື່ນຂອງລັດ

**ມາດຕາ 78 (ປັບປຸງ) ການພົວພັນລະຫວ່າງ ສະພາປະຊາຊົນຂັ້ນແຂວງ ກັບ ສະພາແຫ່ງຊາດ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບສະພາແຫ່ງຊາດ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການທາບທາມປະກອບຄໍາເຫັນ ຕໍ່ການສ້າງ, ປັບປຸງກົດໝາຍ ແລະ ນິຕິກໍາອື່ນ;
2. ການເຂົ້າຮ່ວມຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທໍາມະນູນ, ກົດໝາຍ ແລະ ມະຕິກອງປະຊຸມ ສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ ຢູ່ທ້ອງຖິ່ນ;
3. ການປະກອບຄໍາເຫັນ ຕໍ່ບັນຫາສໍາຄັນທີ່ຕິດພັນກັບທ້ອງຖິ່ນ;
4. ການສະເໜີ ບໍາລຸງ ສ້າງ, ຍົກລະດັບ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ຂອງສະພາປະຊາຊົນຂັ້ນແຂວງ;
5. ການຂໍທິດຊີ້ນໍາ ກ່ຽວກັບບັນຫາສໍາຄັນພື້ນຖານອື່ນ ທີ່ຈໍາເປັນ.

**ມາດຕາ 79 (ປັບປຸງ) ການພົວພັນ ລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບ ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການທາບທາມຮ່າງກົດໝາຍ ແລະ ການໂຄສະນາ ເຜີຍແຜ່ ກົດໝາຍ;
2. ການລົງເກັບກໍາຂໍ້ມູນ ກ່ຽວກັບການພິຈາລະນາຄໍາຮ້ອງຂໍຄວາມເປັນທໍາຂອງປະຊາຊົນ;
3. ການເຂົ້າຮ່ວມຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທໍາມະນູນ, ກົດໝາຍ ແລະ ມະຕິກອງປະຊຸມ ສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ ກໍຄື ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຢູ່ທ້ອງຖິ່ນ;
4. ການປຶກສາຫາລື ກ່ຽວກັບບັນຫາສໍາຄັນອື່ນ ທີ່ຈໍາເປັນ.

**ມາດຕາ 80 (ປັບປຸງ) ການພົວພັນລະຫວ່າງ ສະພາປະຊາຊົນຂັ້ນແຂວງ ກັບ ອົງການລັດ ຂັ້ນແຂວງ ແລະ ພາກ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບອົງການລັດ ຂັ້ນແຂວງ ແລະ ພາກ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການສ້າງ ແລະ ປັບປຸງ ນິຕິກໍາທີ່ມີຜົນບັງຄັບໃຊ້ທົ່ວໄປຂອງທ້ອງຖິ່ນ;
2. ການຄົ້ນຄວ້າ ກ່ຽວກັບບັນຫາສໍາຄັນພື້ນຖານຂອງທ້ອງຖິ່ນ ທີ່ຈະສະເໜີໃຫ້ສະພາປະຊາຊົນຂັ້ນແຂວງພິຈາລະນາ;

3. ການຄົ້ນຄວ້າບຸກຄະລາກອນ ທີ່ຈະສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ;

4. ການຄົ້ນຄວ້າ ກ່ຽວກັບການແກ້ໄຂຄໍາຮ້ອງທຸກຂອງປະຊາຊົນ;

5. ການເຂົ້າຮ່ວມ ແລະ ໃຫ້ການຊີ້ແຈງຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ການເຂົ້າຮ່ວມກອງປະຊຸມສໍາຄັນຕ່າງໆ ຂອງອົງການອໍານາດລັດ ຂັ້ນແຂວງ;

6. ການປຶກສາຫາລື ກ່ຽວກັບບັນຫາສໍາຄັນອື່ນ ທີ່ຈໍາເປັນ.

**ມາດຕາ 81 (ປັບປຸງ) ການພົວພັນລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການກະກຽມ ໃຫ້ແກ່ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ການຕິດຕາມກວດກາວຽກງານຂອງສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

2. ການປຶກສາຫາລື ກ່ຽວກັບບັນຫາສໍາຄັນອື່ນ ທີ່ຈໍາເປັນ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 82 (ປັບປຸງ) ຂໍ້ຫ້າມ ສໍາລັບສະມາຊິກສະພາປະຊາຊົນຂັ້ນແຂວງ**

ຫ້າມສະມາຊິກສະພາປະຊາຊົນຂັ້ນແຂວງ ມີພຶດຕິກໍາ ດັ່ງນີ້:

1. ຂາດການເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ ໂດຍບໍ່ມີເຫດຜົນ, ເມີນເສີຍຕໍ່ການປະຕິບັດໜ້າທີ່;

2. ສວຍໃຊ້ ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົວ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກຂອງຕົນ;

3. ຈັດຕັ້ງເປັນກຸ່ມກ້ອນ ຫຼື ແບ່ງແຍກຄວາມສາມັກຄີປະຊາຊົນລາວບັນດາເຜົ່າ ແລະ ຄວາມສາມັກຄີພາຍໃນສະພາປະຊາຊົນຂັ້ນແຂວງ;

4. ກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດຂອງການຈັດຕັ້ງ, ລວມໝູ່ ຫຼື ບຸກຄົນ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ.

**ມາດຕາ 83 (ປັບປຸງ) ຂໍ້ຫ້າມ ສໍາລັບການຈັດຕັ້ງ ແລະ ບຸກຄົນອື່ນ**

ຫ້າມ ການຈັດຕັ້ງ ແລະ ບຸກຄົນອື່ນ ມີ ພຶດຕິກໍາ ດັ່ງນີ້:

1. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ສະມາຊິກ ຫຼື ພະນັກງານ-ລັດຖະກອນ ສະພາປະຊາຊົນຂັ້ນແຂວງ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ;

2. ຍົກຍ້າຍ ສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ປະຈໍາການ ໂດຍບໍ່ມີການຕົກລົງຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

3. ລະເມີດສິດ, ຜົນປະໂຫຍດ, ຍັກຍອກ, ສໍ້ໂກງເອົາຊັບສິນ ຂອງສະພາປະຊາຊົນຂັ້ນແຂວງ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ.

# ພາກທີ VII
# ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ, ກາໝາຍ ແລະ ຕາປະທັບ

**ມາດຕາ 84 ວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ**

ວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ໃຫ້ຖືເອົາ ວັນທີ 4 ສິງຫາ 1978 ຊຶ່ງແມ່ນວັນປະກາດໃຊ້ກົດໝາຍວ່າດ້ວຍການຈັດຕັ້ງສະພາປະຊາຊົນຂັ້ນຕ່າງໆ.

**ມາດຕາ 85 (ປັບປຸງ) ງົບປະມານຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ມີງົບປະມານຮັບໃຊ້ການເຄື່ອນໄຫວວຽກງານຂອງຕົນ ໂດຍປະຕິບັດຫຼັກການລວມສູນງົບປະມານແຫ່ງລັດ, ມີການແບ່ງຄວາມຮັບຜິດຊອບ ແລະ ແບ່ງຂັ້ນຄຸ້ມຄອງແຕ່ລະຂັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 86 (ປັບປຸງ) ເຄື່ອງໝາຍ ແລະ ກາໝາຍ ຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີເຄື່ອງໝາຍ ແລະ ກາໝາຍ ສະເພາະຂອງຕົນ ໂດຍແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳລົງ.

**ມາດຕາ 87 (ປັບປຸງ) ຕາປະທັບຂອງປະທານສະພາປະຊາຊົນຂັ້ນແຂວງ**

ຕາປະທັບຂອງປະທານສະພາປະຊາຊົນຂັ້ນແຂວງ ເປັນຮູບວົງມົນ, ຢູ່ໃນກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາປະຊາຊົນ ນະຄອນຫຼວງ, ແຂວງ.....", ເບື້ອງລຸ່ມຂຽນວ່າ "ປະທານ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 88 (ປັບປຸງ) ຕາປະທັບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຕາປະທັບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາປະຊາຊົນ ນະຄອນຫຼວງ, ແຂວງ...", ເບື້ອງລຸ່ມຂຽນວ່າ "ຄະນະປະຈຳ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 89 (ປັບປຸງ) ຕາປະທັບຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາປະຊາຊົນ ນະຄອນຫຼວງ, ແຂວງ...", ເບື້ອງລຸ່ມຂຽນວ່າ "ຄະນະກຳມະການ..." ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 90 (ປັບປຸງ) ຕາປະທັບຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ**

ຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ໃນກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາປະຊາຊົນ ນະຄອນຫຼວງ, ແຂວງ...", ເບື້ອງລຸ່ມຂຽນວ່າ "ຫ້ອງວ່າການ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 91 (ປັບປຸງ) ຕາປະທັບຂອງກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ**

ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ ມີຕາປະທັບຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາປະຊາຊົນ ນະຄອນຫຼວງ, ແຂວງ...", ເບື້ອງລຸ່ມຂຽນວ່າ "ຊື່ກົງຈັກ..." ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 92 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃນການປະຕິບັດມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 93 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບສະພາປະຊາຊົນຂັ້ນແຂວງ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 94 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ອອກຄຳແນະນຳຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 95 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ຕຸລາ 2024 ພາຍຫຼັງ ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015, ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປີ 2015 ສະບັບເລກທີ 11/ສພຊ, ລົງວັນທີ 14 ພະຈິກ 2016 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ